ທີ່ 0204 (ວຈ)/350

ສຳນັກງານສົ່ງເສີມການຄ້າໃນຕ່າງປະເທດ
ສະຖານເອກອັກຄະຣາຊະທູດໄທ
028 ບ້ານໂພນໄຊ, ຖະໜົນໄກສອນພົມວິຫານ
ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2012

ຮຽນ: ທ່ານຫົວໜ້າຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ
ເລື່ອງ: ການສົ່ງອອກໃບຢາສູບຂອງ ສປປ ລາວ ຜ່ານຣາຊະອານາຈັກໄທໄປປະເທດທີສາມ

ອີງຕາມໜັງສືຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0224/ທອຄ.ກຂອ. ລົງວັນທີ 5 ມັງກອນ 2011 ແລະ ສະບັບເລກທີ 1652/ທອຄ.ກຂອ. ລົງວັນທີ 18 ກໍລະກົດ 2011

ອີງຕາມໜັງສືສຳນັກງານສົ່ງເສີມການຄ້າລະຫວ່າງປະເທດ ສະຖານເອກອັກຄະຣາຊະທູດໄທ ສະບັບເລກທີ 0204(ວຈ)/423 ລົງວັນທີ 15 ສິງຫາ 2011

ສຳນັກງານທູດການຄ້າ ແຫ່ງ ຣາຊະອານາຈັກໄທປະຈຳ ສປປ ລາວ ຂໍສະແດງຄວາມນັບຖື ແລະ ຂໍຖືເປັນກຽດຮຽນໃຫ້ຊາບວ່າ: ຕາມໜັງສືທີ່ອ້າງເຖິງ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຂໍຄວາມຮ່ວມມືໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງຂອງຣາຊະອານາຈັກໄທ ເພື່ອຂໍອະນຸຍາດໃນການຂົນສົ່ງໃບຢາສູບຂອງ ສປປ ລາວ ຜ່ານຣາຊະອານາຈັກໄທໄປປະເທດທີສາມ ແລະ ສຳນັກງານໄດ້ປະສານຜ່ານກົມເຈລະຈາການຄ້າລະຫວ່າງປະເທດ ໄປຍັງ ກົມວິຊາການກະເສດ, ກະຊວງກະເສດ ແລະ ສະຫະກອນ ໃນຖານະທີ່ເປັນໜ່ວຍງານຮັບຜິດຊອບເລື່ອງດັ່ງກ່າວ ແລະ ໄດ້ແຈ້ງຄວາມຄືບໜ້າການດຳເນີນງານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະໄລຍະແລ້ວ ນັ້ນ

ໃນໂອກາດນີ້, ໄດ້ຮັບການປະສານແຈ້ງຈາກກົມເຈລະຈາການຄ້າລະຫວ່າງປະເທດ ວ່າ: ກົມວິຊາການກະເສດ, ກະຊວງກະເສດ ແລະ ສະຫະກອນ ໄດ້ນຳປະກາດ ເລື່ອງ: ເງື່ອນໄຂການນຳຜ່ານຢາສູບຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກາດລົງໃນຣາຊະກິດຈານຸເບກສາ

ຕັ້ງແຕ່ວັນທີ 7 ມິຖຸນາ 2012 ແລະ ຈະມີຜົນບັງຄັບໃຊ້ເມື່ອພົ້ນສາມສິບວັນ ນັບແຕ່ວັນປະກາດໃນຣາຊະກິດຈານຸເບກສາເປັນຕົ້ນໄປ (ລາຍລະອຽດດັ່ງປະກາດກົມວິຊາການກະເສດ ເລື່ອງ: ເງື່ອນໄຂການນຳຜ່ານຢາສູບຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ.ສ. 2555 ທີ່ຄັດຕິດມາພ້ອມ)

ສະນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະ ຂໍຄວາມຮ່ວມມືໃນການແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງປະຕິບັດຕາມປະກາດດັ່ງກ່າວ ດ້ວຍ.

ຂໍສະແດງຄວາມນັບຖື,

ອັກຄະຣາດຊະທູດທີ່ປຶກສາ (ຝ່າຍການຄ້າ)

OFFICE OF COMMERCIAL AFFAIRS
ROYAL THAI EMBASSY VIENTIANE

ພິມົນ ປິ່ງກອງແກ້ວ

ສຳນັກງານທູດການຄ້າແຫ່ງຣາຊະອານາຈັກໄທ
ໂທ: (021) 413 704, 413 706
ໂທລະສານ: (021) 412 089
E-mall: vtditp@laotel.com

เอกสารแนบ



# ประกาศกรมวิชาการเกษตร

## เรื่อง เงื่อนไขการนำผ่านยาสูบจากสาธารณรัฐประชาธิปไตยประชาชนลาว พ.ศ. ๒๕๕๕

กรมวิชาการเกษตรได้วิเคราะห์ความเสี่ยงศัตรูพืชของยาสูบนำผ่านจากสาธารณรัฐประชาธิปไตยประชาชนลาว เสร็จสิ้นแล้ว

อาศัยอำนาจตามความในมาตรา ๘ (๒) และมาตรา ๑๐ แห่งพระราชบัญญัติกักพืช พ.ศ. ๒๕๐๗ ซึ่งแก้ไขเพิ่มเติมโดยพระราชบัญญัติกักพืช (ฉบับที่ ๓) พ.ศ. ๒๕๕๑ อันเป็นกฎหมายที่มีบัญญัติบางประการเกี่ยวกับการจำกัดสิทธิและเสรีภาพของบุคคล ซึ่งมาตรา ๒๙ ประกอบมาตรา ๓๒ มาตรา ๓๓ มาตรา ๔๑ และมาตรา ๔๓ ของรัฐธรรมนูญแห่งราชอาณาจักรไทย บัญญัติให้กระทำได้โดยอาศัยอำนาจตามบัญญัติแห่งกฎหมาย อธิบดีกรมวิชาการเกษตรโดยคำแนะนำของคณะกรรมการกักพืช ออกประกาศกำหนดเงื่อนไขการนำผ่านยาสูบจากสาธารณรัฐประชาธิปไตยประชาชนลาว ดังต่อไปนี้

ข้อ ๑ ประกาศนี้เรียกว่า "ประกาศกรมวิชาการเกษตร เรื่อง เงื่อนไขการนำผ่านยาสูบจากสาธารณรัฐประชาธิปไตยประชาชนลาว พ.ศ. ๒๕๕๕"

ข้อ ๒ ประกาศนี้ให้ใช้บังคับเมื่อพ้นกำหนดสามสิบวันนับแต่วันประกาศในราชกิจจานุเบกษาเป็นต้นไป

ข้อ ๓ ชนิดพืช

ยาสูบ (tobacco, *Nicotiana* spp.) ตามประกาศนี้ ได้แก่ ใบยาสูบอบแห้ง (dried tobacco left)

ข้อ ๔ หน่วยงานที่รับผิดชอบ

๔.๑ ราชอาณาจักรไทย คือ กรมวิชาการเกษตร

๔.๒ สาธารณรัฐประชาธิปไตยประชาชนลาว คือ Ministry of Agriculture and Forestry ซึ่งต่อไปในประกาศนี้จะเรียกว่า "MAF"

ข้อ ๕ การขออนุญาตนำผ่าน

ต้องมีใบอนุญาตนำผ่านซึ่งออกให้โดยกรมวิชาการเกษตร

ข้อ ๖ วิธีการขนส่ง

ต้องส่งยาสูบมาจากเมืองท่าแห่งหนึ่งในสาธารณรัฐประชาธิปไตยประชาชนลาวไปยังเมืองท่าปลายทางในราชอาณาจักรไทย ในลักษณะเป็นสินค้าขนส่งทางบก

ข้อ ๗ ข้อกำหนดสำหรับการนำเข้า

๗.๑ ต้องบรรจุยาสูบในบรรจุภัณฑ์ที่ใหม่ สะอาด

๗.๒ ต้องบรรจุยาสูบในตู้ขนส่งสินค้าที่ปิดมิดชิด

๗.๓ ต้องติดบัตรกำกับการผ่าน แบบ พ.ก. ๔-๒ ที่ตู้บรรจุสินค้า

๗.๔ ต้องมีใบรับรองสุขอนามัยพืชซึ่งออกโดย MAF กำกับมาด้วย โดยต้นฉบับใบรับรองสุขอนามัยพืชต้องแนบมาพร้อมกับสินค้าทุกครั้งที่นำผ่านราชอาณาจักรไทย

ประกาศ ณ วันที่ ๒๔ พฤษภาคม พ.ศ. ๒๕๕๕
จิรากร โกศัยเสวี
อธิบดีกรมวิชาการเกษตร

**ເອກະສານຕິດຄັດ**

ໜ້າ 10

ເຫຼັ້ມ 129 ຕອນພິເສດ 90 ຣາຊະກິດຈານຸເບກສາ 7 ມິຖຸນາ 2555

**ປະກາດກົມວິຊາການກະເສດ**

**ເລື່ອງ ເງື່ອນໄຂການນຳຜ່ານຢາສູບ ຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ພ.ສ 2555**

ກົມວິຊາການກະເສດ ໄດ້ວິເຄາະຄວາມສ່ຽງສັດຕູພືດຂອງຢາສູບ ນຳຜ່ານຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນທີ່ຮຽບຮ້ອຍແລ້ວ.

ອາໄສອຳນາດຕາມຄວາມ ໃນມາດຕາ 8 (2) ແລະ ມາດຕາ 10 ແຫ່ງພະຣາຊະບັນຍັດກັກພືດ ພ.ສ 2507 ຊຶ່ງແກ້ໄຂເພີ່ມເຕີມ ໂດຍພະຣາຊະບັນຍັດກັກພືດ (ສະບັບທີ 3) ພ.ສ 2551 ອັນເປັນກົດໝາຍທີ່ມີບັນຍັດບາງປະການ ກ່ຽວກັບການຈຳກັດສິດ ແລະ ເສລີພາບຂອງບຸກຄົນ ເຊິ່ງມາດຕາ 29 ປະກອບກັບມາດຕາ 32, ມາດຕາ 33, ມາດຕາ 41 ແລະ ມາດຕາ 43 ຂອງລັດຖະທຳມະນູນແຫ່ງຣາຊະອານາຈັກໄທ ບັນຍັດໃຫ້ປະຕິບັດໄດ້ ໂດຍອາໄສອຳນາດບັນຍັດແຫ່ງກົດໝາຍ ອະທິບໍດີກົມວິຊາການກະເສດ ໂດຍຄຳແນະນຳຂອງຄະນະກຳມະການກັກພືດ ອອກປະກາດກຳນົດເງື່ອນໄຂການນຳຜ່ານຢາສູບ ຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດັ່ງຕໍ່ໄປນີ້:

ຂໍ້ 1 ປະກາດນີ້ເອີ້ນວ່າ "ປະກາດກົມວິຊາການກະເສດ ເລື່ອງ ເງື່ອນໄຂການນຳຜ່ານຢາສູບ ຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ.ສ 2555".

ຂໍ້ 2 ປະກາດນີ້ ມີຜົນບັງຄັບໃຊ້ ຫຼັງຈາກ ສາມສິບວັນ ນັບແຕ່ວັນປະກາດໃນຣາຊະກິດຈານຸເບກສາ ເປັນຕົ້ນໄປ.

ຂໍ້ 3 ຊະນິດພືດ

ຢາສູບ (Tobacco, Nicotiana spp.) ຕາມປະກາດນີ້ ໄດ້ແກ່ໃບຢາສູບອົບແຫ້ງ (Dried tobacco left).

ຂໍ້ 4 ໜ່ວຍງານທີ່ຮັບຜິດຊອບ

4.1. ຣາຊະອານາຈັກໄທ ຄື ກົມວິຊາການກະເສດ

4.2. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄື Ministry of Agriculture and Forestry ຊຶ່ງຕໍ່ໄປໃນປະກາດນີ້ຈະເອີ້ນວ່າ "MAF"

ຂໍ້ 5 ການຂໍອະນຸຍາດນຳຜ່ານ

ຕ້ອງມີໃບອະນຸຍາດນຳຜ່ານ ເຊິ່ງອອກໃຫ້ໂດຍກົມວິຊາການກະເສດ

ຂໍ້ 6 ວິທີການຂົນສົ່ງ

ຕ້ອງສົ່ງຢາສູບມາຈາກເມືອງທ່າແຫ່ງໜຶ່ງ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປຍັງເມືອງທ່າປາຍທາງໃນຣາຊະອານາຈັກໄທ ໃນລັກສະນະເປັນສິນຄ້າຂົນສົ່ງທາງບົກ.

ຂໍ້ 7 ຂໍ້ກຳນົດສຳລັບການນຳເຂົ້າ

7.1. ຕ້ອງບັນຈຸຢາສູບໃນພາຊະນະບັນຈຸທີ່ໃໝ່, ສະອາດ;

7.2. ຕ້ອງບັນຈຸຢາສູບໃນຕູ້ຂົນສົ່ງສິນຄ້າທີ່ປິດແໜ້ນໜາ;

7.3. ຕ້ອງຕິດບັດກຳກັບການຜ່ານແບບ ພ.ກ 4-2 ທີ່ຕູ້ບັນຈຸສິນຄ້າ

7.4. ຕ້ອງມີໃບຮັບຮອງສຸຂານາໄມພືດຊຶ່ງອອກໂດຍ MAF ກຳກັບມານຳ ໂດຍຕົ້ນສະບັບໃບຮັບຮອງສຸຂານາໄມພືດ ຕ້ອງຕິດຄັດມາພ້ອມກັບສິນຄ້າ ທຸກຄັ້ງທີ່ນຳຜ່ານຣາຊະອານາຈັກໄທ.

ປະກາດ ວັນທີ 24 ພຶດສະພາ ພ.ສ 2555

ຈິຣາກອນ ໂກໄສເສວີ

ອະທິບໍດີກົມວິຊາການກະເສດ